ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຜູ້ສະໝັກ ສສຊ ເຂດ 1 ພົບປະຫາສຽງ ຢູ່ ທຫລ




ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ມີການຈັດຕັ້ງການພົບປະ ແລະ ການເຄື່ອນໄຫວໂຄສະນາຫາສຽງຂອງຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຊຸດທີ 9 ປະຈຳເຂດເລືອກຕັ້ງ ທີ 1 ນະຄອນຫຼວງວຽງຈັນ ຢູ່ຂະແໜງການທະນາຄານໃນວັນທີ 18 ກຸມພາ 2021 ທີ່ສະຖາບັນການທະນາຄານ ຊຶ່ງນຳໂດຍທ່ານ ປອ. ລິນຄຳ ດວງສະຫວັນ ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ພ້ອມດ້ວຍຜູ້ສະໝັກຮັບເລືອກຕັ້ງ 5 ທ່ານ ໂດຍການຮັບຕ້ອນຢ່າງອົບອຸ່ນຈາກທ່ານນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ ແລະ ບັນດາພະນັກງານຫຼັກແຫຼ່ງຈາກ ທຫລ, ທະນາຄານທຸລະກິດລັດ, ທະນາຄານສະເພາະກິດ ແລະ ພາກສ່ວນກ່ຽວຂ້ອງ.

ໃນໂອກາດດັ່ງກ່າວ; ທ່ານຮອງຜູ້ວ່າການ ທຫລ ໄດ້ລາຍງານສະພາບການຈັດຕັ້ງປະຕິບັດວຽກງານທີ່ພົ້ນເດັ່ນໃນຂະແໜງການທະນາຄານ ໂດຍສະເພາະບັນຫາດ້ານດີ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ, ວິທີແກ້ໄຂໃນຜ່ານມາ ແລະ ແຜນການໃນຕໍ່ໜ້າ ເພື່ອໃຫ້ບັນດາທ່ານສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຊຸດທີ 9 ປະຈຳເຂດເລືອກຕັ້ງ ທີ 1 ນະຄອນຫຼວງວຽງຈັນ ຮັບຊາບ.

ທ່ານ ປອ. ລິນຄຳ ດວງສະຫວັນ ໄດ້ຕາງໜ້າໃຫ້ຜູ້ສະໝັກຮັບເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ 9 ປະຈຳເຂດເລືອກຕັ້ງ ທີ 1 ມີຄຳເຫັນວ່າ: ການລົງໂຄສະນາຫາສຽງຂອງຜູ້ສະໝັກສະມາຊິກສະພາແຫ່ງຊາດ ຊຸດທີ 9 ໃນຄັ້ງນີ້ເພື່ອເປັນການສືບຕໍ່ປະຕິບັດພາລະບົດບາດສິດ ແລະ ໜ້າທີ່ສະພາແຫ່ງຊາດໃຫ້ມີລັກສະນະຕໍ່ເນື່ອງ ເພື່ອປະກອບສ່ວນເຂົ້າໃນພາລະກິດປ່ຽນແປງໃໝ່ຂອງພັກຢູ່ໃນໄລຍະການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ຈະເລີນເຂັ້ມແຂງຂຶ້ນເລື້ອຍໆ, ການລົງມາໂຄສະນາຫາສຽງຂອງຜູ້ແທນຮັບສະໝັກຮັບເລືອກຕັ້ງເປັນ ສສຊ ຊຸດທີ 9 ໃນຄັ້ງນີ້ ເປັນເຫດການ-ການເມືອງໃນປະຫວັດສາດທີ່ສຳຄັນທີ່ສຸດຂອງລະບອບປະຊາທິປະໄຕ ເພື່ອໃຫ້ປະຊາຊົນໄດ້ມີໂອກາດໃຊ້ສິດເລືອກເອົາຜູ້ແທນຂອງຕົນໄປຢູ່ໃນສະພາ ຊຶ່ງເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າ, ເລືອກເອົາຜູ້ທີ່ມີຄວາມຮູ້-ຄວາມສາມາດ, ມີມາດຖານເງື່ອນໄຂຄົບຖ້ວນຢ່າງແທ້ຈິງ.




ໃນພິທີດັ່ງກ່າວ, ຍັງໄດ້ຮັບຟັງການສະເໜີໂຕ ແລະ ຮັບຟັງປະຫວັດການເຄື່ອນໄຫວຂອງຜູ້ສະໝັກຮັບເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ 9 ປະຈຳເຂດເລືອກຕັ້ງ ທີ 1 ນະຄອນຫຼວງວຽງຈັນ ແລະ ຍັງໄດ້ຮຽກຮ້ອງມາຍັງພະນັກງານ-ລັດຖະກອນ ໃນຂະແໜງການທະນາຄານທີ່ເປັນຜູ້ມີສິດປ່ອນບັດເລືອກຕັ້ງໃຫ້ພ້ອມກັນມາໃຊ້ສິດຂອງຕົນເອງ, ພ້ອມທັງເລືອກເອົາຜູ້ມີມາດຖານ, ເງື່ອນໄຂຄົບຖ້ວນສົມບູນເພື່ອເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ເພື່ອຮັບປະກັນໃນບັ້ນເລືອກຕັ້ງ ສສຊ ຊຸດທີ 9 ແລະ ສສຂ ຊຸດທີ 2 ໃຫ້ສຳເລັດ ແລະ ຮັບປະກັນ 3 ຮ້ອຍສ່ວນຮ້ອຍ, ຮັບປະກັນບໍ່ໃຫ້ມີບັດຕາຍໃຫ້ໄດ້ 100%, ຮັບປະກັນໃຫ້ມີຄວາມສະຫງົບປອດໄພໃຫ້ໄດ້ 100%, ຮັບປະກັນໃຫ້ຜູ້ມີສິດປ່ອນບັດໃຫ້ໄດ້ໃຊ້ສິດຂອງຕົນໃຫ້ໄດ້ 100%.

**# ຂ່າວ:ຣັດສະໝີ ດວງສັດຈະ**

**# ພາບ: ວັນປະເສີດ ສົມບູນຂັນ**

**ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ**